ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ

ກົມເຕັກໂນໂລຊີຂໍ້ມູນຂ່າວສານ

ເລກທີ 172/ກວຕ.ກຕຂ

ນະຄອນຫຼວງວຽງຈັນ, ວັນທີ 05 SEP 2014

# ລະບຽບວ່າດ້ວຍການເກັບຄ່າບໍລິການອອກໃບອະນຸຍາດດຳເນີນທຸລະກິດ ໃຫ້ບໍລິການກ່ຽວກັບທຸລະກຳທາງເອເລັກໂຕຣນິກ

- ອີງຕາມ ກົດໝາຍ ວ່າດ້ວຍທຸລະກຳທາງເອເລັກໂຕຣນິກ ສະລັບເລກທີ 20/ສພຊ, ລົງວັນທີ 7 ທັນວາ 2012.
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 309/ນຍ, ລົງວັນທີ 28 ກັນຍາ 2011.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກົມເຕັກໂນໂລຊີຂໍ້ມູນຂ່າວສານ ສະບັບເລກທີ 0839/ກວຕ, ລົງວັນທີ 21 ທັນວາ 2011.

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບການສະບັບນີ້ ກຳນົດຫຼັກການ ແລະ ອັດຕາຄ່າບໍລິການ ເພື່ອທົດລອງນຳໃຊ້ໃນການອອກໃບອະນຸຍາດດຳເນີນທຸລະກິດໃຫ້ບໍລິການກ່ຽວກັບທຸລະກຳທາງເອເລັກໂຕຣນິກ ຢູ່ ສປປ ລາວ.

**ມາດຕາ 2 ໃບອະນຸຍາດດຳເນີນທຸລະກິດໃຫ້ບໍລິການກ່ຽວກັບທຸລະກຳທາງເອເລັກໂຕຣນິກ**

ໃບອະນຸຍາດດຳເນີນທຸລະກິດໃຫ້ບໍລິການກ່ຽວກັບທຸລະກຳທາງເອເລັກໂຕຣນິກ ແມ່ນ ໃບອະນຸຍາດດ້ານວິຊາການ ທີ່ ກົມເຕັກໂນໂລຊີຂໍ້ມູນຂ່າວສານ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ,

ອອກໃຫ້ ເພື່ອຢັ້ງຢືນການຜ່ານການກວດກາດ້ານເຕັກນິກທີ່ນຳໃຊ້ເພື່ອໃຫ້ບໍລິການກ່ຽວກັບທຸລະກຳທາງເອເລັກໂຕຣນິກຂອງຜູ້ດຳເນີນທຸລະກິດ.

**ມາດຕາ 3 ການດຳເນີນທຸລະກິດໃຫ້ບໍລິການກ່ຽວກັບທຸລະກຳທາງເອເລັກໂຕຣນິກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດດຳເນີນທຸລະກິດໃຫ້ບໍລິການກ່ຽວກັບທຸລະກຳທາງເອເລັກໂຕຣນິກ ຢູ່ ສປປ ລາວ ໂດຍປະຕິບັດໃຫ້ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

## ໝວດທີ 2
## ການເກັບຄ່າບໍລິການອອກໃບອະນຸຍາດດຳເນີນທຸລະກິດ

**ມາດຕາ 4 ຄ່າບໍລິການອອກໃບອະນຸຍາດດຳເນີນທຸລະກິດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຂໍອະນຸຍາດໃຫ້ບໍລິການກ່ຽວກັບທຸລະກຳທາງເອເລັກໂຕຣນິກ ຕ້ອງຈ່າຍຄ່າບໍລິການຕາມທີ່ກຳນົດໄວ້ ດັ່ງນີ້:

| | |
|---|---|
| 1. ແບບຟອມຄຳຮ້ອງ | 20,000 ກີບ/ 1ຄຳຮ້ອງ |
| 2. ຄ່າທຳນຽມອອກໃບອະນຸຍາດ | 300,000 ກີບ/ 1ໃບອະນຸຍາດ |
| 3. ຄ່າບໍລິການຄົ້ນຄວ້າບົດປະເມີນດ້ານວິຊາການ | 300,000 ກີບ/ 1ບົດປະເມີນ |

**ມາດຕາ 5 ຄ່າບໍລິການອອກໃບອະນຸຍາດຂໍສືບຕໍ່ດຳເນີນທຸລະກິດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍອະນຸຍາດສືບຕໍ່ດຳເນີນທຸລະກິດໃຫ້ບໍລິການກ່ຽວກັບທຸລະກຳທາງເອເລັກໂຕຣນິກ ຕ້ອງຈ່າຍຄ່າບໍລິການຕາມທີ່ກຳ ນົດໄວ້ ດັ່ງນີ້:

| | |
|---|---|
| 1. ແບບຟອມຄຳຮ້ອງ | 20,000 ກີບ/ 1ຄຳຮ້ອງ |
| 2. ຄ່າທຳນຽມອອກໃບອະນຸຍາດ | 300,000 ກີບ/ 1ໃບອະນຸຍາດ |
| 3. ຄ່າບໍລິການຄົ້ນຄວ້າເອກະສານ | 100,000 ກີບ/ 1ຊຸດ |

**ມາດຕາ 6 ຄ່າບໍລິການອອກໃບອະນຸຍາດຂໍເພີ່ມປະເພດໃຫ້ບໍລິການກ່ຽວກັບທຸລະກຳທາງເອເລັກໂຕຣນິກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍອະນຸຍາດເພີ່ມປະເພດໃຫ້ບໍລິການກ່ຽວກັບທຸລະກຳທາງເອເລັກໂຕຣນິກ ຕ້ອງຈ່າຍຄ່າບໍລິການຕາມທີ່ກຳນົດໄວ້ ດັ່ງນີ້:

1. ແບບຟອມຄຳຮ້ອງ 20,000 ກີບ/ 1ຄຳຮ້ອງ
2. ຄ່າທຳນຽມອອກໃບອະນຸຍາດ 300,000 ກີບ/ 1ໃບອະນຸຍາດ
3. ຄ່າບໍລິການຄົ້ນຄວ້າບົດປະເມີນດ້ານວິຊາການ 300,000 ກີບ/ 1ບົດປະເມີນ

## ໝວດທີ 3
## ມາດຕະການຈັດຕັ້ງປະຕິບັດ

**ມາດຕາ 7 ການຈັດຕັ້ງປະຕິບັດ**

ເພື່ອຮັບປະກັນ ໃຫ້ແກ່ການຈັດຕັ້ງປະຕິບັດ ລະບຽບວ່າດ້ວຍການເກັບຄ່າບໍລິການອອກໃບອະນຸຍາດດຳເນີນທຸລະກິດໃຫ້ບໍລິການກ່ຽວກັບທຸລະກຳທາງເອເລັກໂຕຣນິກ ໃຫ້ບັນລຸຜົນສຳເລັດ, ບັນດາມາດຕະການທີ່ຕ້ອງປະຕິບັດ ມີ ດັ່ງນີ້:

1. ພະແນກນະໂຍບາຍ ແລະ ຍຸດທະສາດ ເຮັດໜ້າທີ່ໂດຍກົງໃນການຄຸ້ມຄອງ ເອກະສານຄຳຮ້ອງ, ຄ່າບໍລິການ ແລະ ເກັບຮັກສາບັນຊີຕິດຕາມຜູ້ຂໍອະນຸຍາດດຳເນີນທຸລະກິດ ໂດຍປະຕິບັດລະບອບການລາຍງານແກ່ຄະນະກົມຢ່າງເປັນປົກກະຕິ ທັງເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຄົ້ນຄວ້າເອກະສານຄຳຮ້ອງຂໍດຳເນີນທຸລະກິດ, ລົງສຳຫຼວດສະຖານທີ່ດຳເນີນທຸລະກິດ ແລະ ແຈ້ງຄຳຕອບແກ່ຜູ້ຍື່ນຄຳຮ້ອງ ພາຍໃນກຳນົດ 10 ວັນລັດຖະການ;

2. ພະແນກຄຸ້ມຄອງໄອທີ ແລະ ພະແນກສົ່ງເສີມ ແລະ ພັດທະນາ ມີໜ້າທີ່ຊ່ວຍຄົ້ນຄວ້າເອກະສານອະທິບາຍດ້ານເຕັກນິກທີ່ປະກອບສຳນວນຄຳຮ້ອງ, ລົງສຳຫຼວດສະຖານທີ່ ແລະ ປະກອບຄຳເຫັນສົ່ງໃຫ້ພະແນກນະໂຍບາຍ ແລະ ຍຸດທະສາດ ພາຍໃນກຳນົດ 7 ວັນລັດຖະການ.

**ມາດຕາ 8 ຜົນສັກສິດ**

ລະບຽບການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ**

ແກ້ວນະຄອນ ໄຊສຸລຽນ

# ເອກະສານປະກອບໃນການຂໍອະນຸຍາດ

1. ແບບຟອມຄຳຮ້ອງ 1 ສະບັບ
2. ບົດລາຍງານວິຊາການກ່ຽວກັບລະບົບບໍລິການ 1 ສະບັບ
3. ສຳເນົາໃບທະບຽນວິສະຫະກິດ 1 ສະບັບ
4. ສຳເນົາໃບທະບຽນອາກອນ (ຖ້າມີ) 1 ສະບັບ
5. ສຳເນົາບັດປະຈຳຕົວ/ໜັງສືຜ່ານແດນ 1 ສະບັບ
6. ໃບມອບສິດ (ໃນກໍລະນີເປັນຕົວແທນ) 1 ສະບັບ
7. ຄັດຕິດແຜນທີ່ຂອງສະຖານທີ່ຕັ້ງວິສະຫະກິດ 1 ສະບັບ
8. ຄັດຕິດຊີວະປະຫວັດວິຊາການຫຍໍ້ ແລະ ສຳເນົາໃບປະກາສະນີຍະບັດຜູ້ລະ (ຖ້າມີ) 1 ສະບັບ
9. ໜັງສືອະທິບາຍກ່ຽວກັບວິສະຫະກິດແມ່ (ໃນກໍລະນີຕ້ອງການເປີດສາຂາຢູ່ ສປປ ລາວ) 1 ສະບັບ
10. ຮູບຖ່າຍເຈົ້າຂອງວິສະຫະກິດ ຂະໜາດ 3X4 (ບໍ່ກາຍ 6 ເດືອນ) 1 ແຜ່ນ